# ບົດຂ່າວ

## ການສົນທະນາກ່ຽວກັບ ການແກ້ໄຂບັນຫາການຈຳແນກ ແລະ ການສົ່ງເສີມຄວາມຫຼາກຫຼາຍ

## 1 ມິຖຸນາ

ງານສົນທະນາດັ່ງກ່າວ ໄດ້ຈັດຂຶ້ນໃນວັນທີ 1 ມິຖຸນາ ທີ່ຜ່ານມາ ຖືວ່າເປັນການຮ່ວມເອົາບັນດາຜູ້ທີ່ເຮັດວຽກຫຼັກໃນການພັດທະນານະໂຍບາຍແຫ່ງຊາດເພື່ອສົ່ງເສີມການບໍ່ຈຳແນກ ແລະ ການຮັບປະກັນວ່າປະຊາຊົນທຸກຄົນມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

ເພື່ອເປັນຂີດໝາຍຕໍ່ກັບວັນທີ່ມີຄວາມສຳຄັນ ຂອງເດືອນແຫ່ງຄວາມພາກພູມໃຈຂອງກຸ່ມຄົນທີ່ມີຄວາມຫຼາກຫຼາຍ, 1 ມິຖຸນາ ການສົນທະນາພາຍໃຕ້ຫົວຂໍ້ການບໍ່ຈຳແນກຕໍ່ກຸ່ມຄົນທີ່ມີຄວາມຫຼາກຫຼາຍ ຫຼື LGBTQI+ ແມ່ນໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນເປັນເວລາເຄິ່ງມື້ ໂດຍຄູ່ຮ່ວມຈັດງານກໍຄືກະຊວງ ຍຸຕິທຳ, UNDP ແລະ ພູມໃຈທີ່ເປັນເຮົາ ເຊິ່ງງານຄັ້ງນີ້ກໍແມ່ນເພື່ອຄົ້ນຄວ້າວິທີການທີ່ມີຄວາມເປັນໄປໄດ້ ໃນການສ້າງຄວາມເຂັ້ມແຂງໃນການປົກປ້ອງກຸ່ມຄົນ LGBTQI+ ໂດຍມີຜູ້ເຂົ້າຮ່ວມທີ່ເປັນຕົວແທນຈາກພາກລັດ, ອົງການຈັດຕັ້ງສາກົນ, ວິຊາການກົດໝາຍ, ອົງການຈັດຕັ້ງທາງສັງຄົມ, ສະຖາບັນວິຊາການ ແລະ ຊຸມຊົນຂອງ LGBTQI+.

ການສົນທະນາແມ່ນສຸມໃສ່ການສ້າງຄວາມເຂົ້າໃຈທີ່ເຂັ້ມແຂງ ກ່ຽວກັບກອບກົດໝາຍເພື່ອສົ່ງເສີມການບໍ່ຈຳແນກກ່ອນ ເຊິ່ງຕ້ອງໄດ້ເອົາໃຈໃສ່ຕໍ່ກົດໝາຍແຮງງານ, ກົດໝາຍອາຍາ ແລະ ກົດໝາຍຄອບຄົວ ແລະ ພ້ອມທັງແບ່ງປັນປະສົບການວ່າກົດໝາຍດັ່ງກ່າວນັ້ນ ແມ່ນໄດ້ມີປົກປ້ອງປະຊາຊົນຈາກການຈຳແນກແນວໃດ. ການສົນທະນານີ້ຍັງໄດ້ຄົ້ນຄວ້າແນວທາງທີ່ມີຄວາມເປັນໄປໄດ້ ເພື່ອສ້າງຄວາມເຂັ້ມແຂງດ້ານກົດໝາຍ ແລະ ນະໂຍບາຍ ໂດຍສະເພາະແມ່ນການຮັບປະກັນວ່າ ຜູ້ທີ່ມີການຈຳແນກຕໍ່ກຸ່ມຄົນ LGBTQI+ ຕ້ອງມີຄວາມຮັບຜິດຊອບ. ພູມໃຈທີ່ເປັນເຮົາ ແລະ ນັກຄົ້ນຄວ້າ ດຣ. ອິນລິຊາ ບາແສງຄຳ ໄດ້ກ່າວເຖິງເນື້ອໃນຈິດໃຈທີ່ມີຄວາມໝາຍເຖິງການຈຳແນກ ທີ່ຊຸມຊົນ LGBTQI+ ໄດ້ປະສົບພົບພໍ້ ແລະ ໂອກາດເພື່ອແກ້ໄຂບັນຫາດັ່ງກ່າວນັ້ນ.

ຜ່ານການສົນທະນາໃນຄັ້ງນີ້ ໄດ້ເຮັດໃຫ້ເຫັນວ່າກຸ່ມຄົນ LGBTQI+ ແມ່ນປະເຊີນກັບການຈຳແນກຫຼາຍຮູບການກວ່າກຸ່ມຄົນອື່ນໆໃນສັງຄົມ ແລະ ຊຸມຊົນ LGBTQI+ ສ່ວນຫຼາຍແມ່ນປະສົບກັບການຈຳແນກໃນ ການບໍລິການສາທາລະນະສຸກ, ທີ່ພັກອາໄສ, ການສຶກສາ ແລະ ການຈ້າງງານ. ຈາກຜົນການສຶກສາຂອງ UNESCO ກ່ຽວກັບໄວໜຸ່ມ LGBTQI+ ໃນ ສປປ ລາວ ພົບວ່າ 40% ຂອງໄວໜຸ່ມທີ່ໃຫ້ຄຳຕອບ ແມ່ນເຄີຍໄດ້ປະສົບພົບພໍ້ກັບການຈຳແນກໃນໂຮງຮຽນ ເຊິ່ງລວມມີຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ນີ້ກໍເປັນການຈຳແນກລັກສະນະດຽວກັບທີ່ພົບເຫັນໃນບ່ອນເຮັດເຮັດວຽກ.

ທ່ານ ຄຳພອນ ສີປະເສີດ, ຫົວໜ້າກົມຮ່ວມມືສາກົນ ກະຊວງ ຍຸຕິທຳ ໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນຂອງການຮັບປະກັນຫຼັກການປົກຄອງລັດດ້ວຍກົດໝາຍ ໂດຍສະເພາະແມ່ນການເຄົາລົບລັດຖະທຳມະນູນ. ລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ກຳນົດໄວ້ຢ່າງຊັດເຈນ ລັດຖະທຳມະນູນຮັບປະກັນຄວາມເທົ່າທຽມ ແລະ ບໍ່ຈຳແນກຕໍ່ພົນລະເມືອງທຸກຄົນ. ດັ່ງນັ້ນ, ເພື່ອຮັບປະກັນການຍົກສູງການເຄົາລົບລັດຖະທຳມະນູນ, ພວກເຮົາຕ້ອງສືບຕໍ່ກວດກາບັນດາກົດໝາຍ ແລະ ຄູ່ມືດ້ານນິຕິກຳ ນີ້ກໍເພື່ອກວດກາຊ່ອງຫວ່າງໃນການປົກປ້ອງກຸ່ມຄົນດັ່ງກ່າວ ໂດຍສະເພາະສຳລັບກຸ່ມຄົນທີ່ຢູ່ໃນຄວາມສ່ຽງຫຼາຍຕໍ່ການຈຳແນກໃນສັງຄົມ.

ທ່ານ ອານັນ ບົວພາ, ປະທານພູມໃຈທີ່ເປັນເຮົາ ໄດ້ຍົກໃຫ້ເຫັນວ່າ ກຸ່ມຄົນ LGBTQI+ ໃນສັງຄົມ ແມ່ນປະສົບກັບການຈຳແນກເນື່ອງຈາກການເໝົາລວມ, ຄວາມເຂົ້າໃຈຜິດ ແລະ ຄວາມອັບປະຍົດ ໃນຂະນະທີ່ຄຸນຄ່າຂອງບຸກຄົນແມ່ນໄດ້ສະແດງອອກທີ່ການກະທຳ ແລະ ຄວາມສາມາດຕົວຈິງຫຼາຍກວ່າການຕັດສິນທີ່ຮູບຮ່າງພາບລັກພາຍນອກ ແລະ ທ່ານຍັງໄດ້ຍໍ້າວ່າ: ທຸກໆຄົນຖືວ່າມີຄວາມສຳຄັນໃນການປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ໂດຍບໍ່ກ່ຽວກັບລົດສະນິຍົມທາງເພດ ແລະ ລັກສະນະທາງເພດ.

ທ່ານ ຊອນ ໂອຄອນເນວ ຜູ້ຊ່ວຍຜູ້ຕາງໜ້າອົງການ UNDP ໄດ້ກ່າວເນັ້ນວ່າ ໃນຂະນະທີ່ມັນມີຫຼາຍຕົວຢ່າງຂອງການປະຕິບັດທີ່ດີກ່ຽວກັບຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມ ໃຫ້ເຮົາໄດ້ຮຽນຮູ້ຈາກສາກົນ ແຕ່ໃນທ້າຍທີ່ສຸດແລ້ວແນວທາງການແກ້ໄຂທີ່ມີປະສິດທິພາບ ແລະ ມີຄວາມຍືນຍົງ ຕ້ອງແມ່ນການກຳນົດທີ່ມາຈາກພາຍໃນຂອງແຕ່ລະປະເທດ ແລະ ບາດກ້າວທຳອິດເພື່ອກ້າວສູ່ແນວທາງການແກ້ໄຂນີ້ກໍແມ່ນການສົນທະນາລະຫວ່າງບັນດາພາກສ່ວນທີ່ກ່ຽວຂ້ອງ ນີ້ຈຶ່ງເປັນເຫດຜົນທີ່ພວກເຮົາຂໍຊົມເຊີຍກະຊວງຍຸຕິທຳ ໃນການຮ່ວມມືເປັນຄູ່ຮ່ວມຈັດງານກັບພວກເຮົາໃນມື້ນີ້ ພ້ອມທັງໄດ້ພົບປະກັບໂດຍກົງກັບຊຸມຊົນ LGBTQI+.

ບັນດາຜູ້ເຂົ້າຮ່ວມຕາງກໍໄດ້ແລກປ່ຽນກັນໃນຫຼາຍໆປະເດັ່ນກ່ຽວກັບການບໍ່ຈຳແນກ ແຕ່ກໍໄດ້ເນື້ອໃນຂໍ້ຄວາມທີ່ຊັດເຈນຈາກບັນດາຜູ້ເຂົ້າຮ່ວມຄື ເຖິງແມ່ນວ່າຄວາມຄືບໜ້າໃນວຽກນີ້ອາດຈະຊ້າ ແຕ່ນະປັດຈຸບັນແມ່ນເວລາຂອງການລົງມືປະຕິບັດ. ໃນນາມເປັນຄູ່ຮ່ວມຈັດງານຄັ້ງນີ້ ມັນໄດ້ສະແດງໃຫ້ເຫັນເຖິງການດຳເນີນການທາງບວກໂດຍພາກລັດ, ຄູ່ຮ່ວມພັດທະນາ, ອົງການຈັງຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ແລະ ຊຸມຊົນ LGBTQI+ ເພື່ອຊຸກຍູ້ໃຫ້ມີການສົນທະນາຫາລືໃນຕໍ່ໜ້າ.

ການສົນທະນາພາຍໃຕ້ຫົວນີ້ ແມ່ນໜຶ່ງກິດຈະກຳທີ່ສືບຕໍ່ຈາກ ເວທີການສົນທະນາ ການສົ່ງເສີມຄວາມຫຼາກຫຼາຍ ແລະ ແລະ ການມີສ່ວນຮ່ວມໃນທຸລະກິດ ທີ່ໄດ້ຈັດຂຶ້ນໃນເດືອນ ກຸມພາ ທີ່ຜ່ານມາ ໂດຍຄູ່ຮ່ວມຈັດງານກໍແມ່ນ UNDP, ພູມໃຈທີ່ເປັນເຮົາ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນເວທີສົນທະນາດັ່ງກ່າວແມ່ນໄດ້ເນັ້ນເຖິງການບໍ່ຈຳແນກໃນບ່ອນເຮັດວຽກ. ຈາກເວທີສົນທະນາຄັ້ງກ່ອນນັ້ນ ແລະ ການສົນທະນາໃນຄັ້ງນີ້ມັນເປັນຄວາມຕໍ່ເນື່ອງກັນ ທີ່ມີເປົ້າໝາຍເພື່ອສ້າງຜົນປະໂຫຍດໃຫ້ບໍ່ສະເພາະແຕ່ກຸ່ມຄົນດຽວ ແຕ່ແມ່ນເພື່ອຜົນປະໂຫຍດສຳລັບທຸກຄົນ ດ້ວຍການສະໜັບສະໜູນສັງຄົມລາວໃຫ້ມີຄວາມຫຼາກຫຼາຍ ແລະ ມີສ່ວນຮ່ວມຈາກທຸກກຸ່ມຄົນ.

------------------------

ຂໍ້ມູນເພີ່ມເຕີມທ່ານສາມາດຕິດຕໍ່:
ທ່ານ ນາງ Olivia Macri
ຜູ້ຊ່ວຍໂຄງການ ອົງການ UNDP
Lane Xang Avenue, P.O. Box 345
Vientiane, Lao PDR
olivia.macri@undp.org